## ສູນກາງການມອບໝາຍພິເສດ
## ຂອງກົມສັງຄົມສົງເຄາະແລະ
## ສາທາຣະນະສຸກປະຈໍາຣັດວໍຊິງຕັນ

# ສະຖານທີ່ອໍານວຍຄວາມສະດວກ
# ການຜັນແປງສະພາບ
# ໜ່ວຍຊຸມຊົນທີ່ປອດໄພ(SCTF)
# ໃນເຂດຄິງຄາວຕີ

ເພື່ອໃຫ້ຮູ້ເພີ່ມໃນເຣື່ອງ
ສູນກາງການມອບໝາຍພິເສດ
ສະຖານທີ່ອໍານວຍຄວາມສະດວກ
ການຜັນປ່ຽນສະພາບ ໜ່ວຍຊຸມຊົນທີ່ປອດໄພ
ໃຫ້ ເບິງແວບໄຊທ໌ຂອງໂຄງການທີ່:

http://www1.dshs.wa.gov/hrsa/scc

ຫລືຂຽນຫາ:

Community Programs
Special Commitment Center
Department of Social
& Health Services
P.O. Box 45322
Olympia, WA 98504-5322

DSHS Secure
Community Transition Facility
in King County
132 South Spokane Street
Seattle, Washington

Washington State
Department of Social
& Health Services

SCC Special Commitment Center

*ຄວາມປອດໄພ • ຄວາມໝັ້ນຄົງ • ການປິ່ນປົວ*



## ຫ້ອງການ SCTF ຂອງກົມ DSHS ໃນເຂດຄິງຄາວຕີ

ຫ້ອງການ SCTF ຂອງກົມ DSHS ໃນເຂດເມືອງຊີອາໂຕລ໌ແມ່ນໄດ້ອອກແບບຮ່າງຄວາມປອດໄພໂດຍມີຣະບົບການຄວບຄຸມບັງຄັບເຂົ້າອອກຢ່າງເຄັ່ງຄັດ. ການເຄື່ອນໄຫວເໜັງຕີແມ່ນຖືກບັງຄັບຄວບຄຸມໂດຍພະນັກງານແລະຣະບົບໄຟຟ້າຕ່າງໆຊຶ່ງຣວມທັງຣະບົບໜ່ວຍໂທຣະທັດຄຸມຢ່າງໃກ້ສິດ.

ບໍ່ມີຜູ້ຢູ່ພາຍໃນຄົນໃດອາດຈະໜີຫ້ອງຄຸມຂັງໄດ້ໂດຍບໍ່ມີພະນັກງານຂອງກົມ DSHS ຕິດຕາມໄປນຳເພື່ອດູແລແລະຄວບຄຸມພຶດຕິກັມຕ່າງໆຂອງເຂົາເຈົ້າ.

ຜູ້ຢູ່ພາຍໃນບ່ອນຄຸມຂັງບໍ່ອາດອອກໜີຈາກຫ້ອງຄຸມຂັງໄດ້ໂດຍບໍ່ໄດ້ຮັບແຜນການອະຍາດເດີນທາງໄວ້ລ່ວງໜ້າທີ່ມີຈຸດປະສົງທີ່ແນ່ນອນໂດຍໄດ້ຖືກທົບທວນແລະອະນຸມັດໃວ້ລ່ວງໜ້າຂອງຕາຕະລາງການເດີນທາງ.

ພະນັກງານຂອງກົມ DSHS ທີ່ເຮັດວຽກຢູ່ໃນຫ້ອງຄຸມຂັງ SCTF ໃນຄິງຄາວຕີແມ່ນໄດ້ຮັບການຝຶກສອນງານເປັນຢ່າງດີ ໃນກໍຣະນີແກ້ບັນຫາຣະບົບຄວາມສຸກເສີນຕ່າງໆ.

ທາງຫ້ອງຄຸມຂັງ SCTF ໄດ້ເຮັດວຽກຮ່ວມກັນຢ່າງໄກ້ສິດກັບອົງການບັງຄັບໃຊ້ກົດໝາຍຕ່າງໆ, ຣວມທັງກົມຕຳຣວດປະຈຳເມືອງຊີອາໂຕລ໌ເພື່ອເນັ້ນເຖິງຄວາມປອດໄພຂອງຊຸມຊົນ.

ການເຮັດວຽກຮ່ວມໄມ້ຮ່ວມມືກັນເຫລົ່ານີ້ ຣວມທັງການຝຶກອົບຣົມວຽກງານໃຫ້ພະນັກງານຂອງສູນຄຸມຂັງ SCTF, ການເຮັດວຽກຕ່າງໆຮ່ວມກັນ, ການປັບປຸງຣະບົບງານຕ່າງໆ, ຣວມທັງການປະສານງານກັນປະຈຳວັນ, ປະຈຳອາທິດເພື່ອການທ່ວງທັນເວລາໃນການໂຍກຍ້າຍສິ່ງຄົນໄປມາແລະກິດຈະກັມຕ່າງໆໃນຊຸມຊົນ.